**ປະກາດສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈຳແຂວງສະຫວັນນະເຂດ**

**ເລກທີ : 7/2567**

**ເລື່ອງ : ແຈ້ງການເລີ່ມໃຫ້ບໍລິການວີຊ່າເອເລັກໂຕຣນິກ (e-Visa)**

**********************

ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈຳແຂວງສະຫວັນນະເຂດ ຂໍແຈ້ງຂໍ້ມູນການປ່ຽນແປງ ທີ່ສຳຄັນໃນການໃຫ້ບໍລິການວີຊ່າທຸກປະເພດຂອງ ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທ ດັ່ງນີ້ :

1. ຕັ້ງແຕ່ວັນທີ 01 ມັງກອນ 2025 ຜູ້ທີ່ບໍ່ແມ່ນບຸກຄົນສັນຊາດໄທ ເຊິ່ງປະຈຸບັນຢູ່ທີ່ ແຂວງສະຫວັນນະເຂດ ແຂວງຄຳມ່ວນ ແຂວງສາລະວັນ ແຂວງຈຳປາສັກ ແຂວງເຊກອງ ແລະ ແຂວງອັດຕະປື ແລະ ປະສົງຈະຍື່ນຂໍວີຊ່າເພື່ອເດີນທາງເຂົ້າປະເທດໄທ ຈະຕ້ອງຍື່ນຂໍວີຊ່າທຸກປະເພດຜ່ານລະບົບ e-Visa ທີ່ https://www.thaievisa.go.th/ ເທົ່ານັ້ນ.

2. ການຊຳລະຄ່າທຳນຽມວີຊ່າໃຫ້ຊຳລະເປັນເງິນສົດສະກຸນເງິນບາດ ທີ່ ຝ່າຍກົງສຸນຂອງສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທປະຈຳແຂວງສະຫວັນນະເຂດ (ຖະໜົນໝາຍເລກ 9 ບ້ານທົວເມືອງເໜືອ ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ) ໂດຍຊຳລະດ້ວຍຕົນເອງ ຫຼື ຝາກຜູ້ອື່ນດຳເນີນການໄດ້.

3. ການພິຈາລະນາຄຳຮ້ອງຂໍວີຊ່າໃນລະບົບ e-Visa ຈະໃຊ້ເວລາປະມານ 10 -15 ວັນລັດຖະການ (ຖ້າເອກະສານຄົບຖ້ວນສົມບູນ) ນັບຈາກວັນທີ່ຊຳລະຄ່າທຳນຽມວີຊ່າ.

4. ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທ ຈະເປີດຮັບຄຳຮ້ອງຂໍວີຊ່າໃນລະບົບປັດຈຸບັນ (ຈອງຄິວທີ່ https://thaivisasvk.com/) ຈົນເຖິງວັນທີ 20 ທັນວາ 2024 ແລະ ຈະປິດຮັບຄຳຮ້ອງຂໍວີຊ່າທຸກປະເພດ ລະຫວ່າງວັນທີ 21 - 31 ທັນວາ 2024 ເພື່ອກຽມການສຳລັບການໃຫ້ບໍລິການໃນລະບົບ e-Visa

ຈຶ່ງປະກາດມາເພື່ອຊາບໂດຍທົ່ວກັນ.

ສະຖານກົງສຸນໃຫຍ່ແຫ່ງຣາຊະອານາຈັກໄທ,
ແຂວງສະຫວັນນະເຂດ.
18 ພະຈິກ 2024

ROYAL THAI CONSULATE-GENERAL,SAVANNAKHET